ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 199 /ລບ

ນະຄອນຫຼວງວຽງຈັນ, ວັນທີ 13.03.2020

# ດຳລັດ
# ວ່າດ້ວຍ ຢາສັດຕະວະແພດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0051/ກປ, ລົງວັນທີ 24 ມັງກອນ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຢາສັດຕະວະແພດ ເພື່ອເຮັດໃຫ້ການດຳເນີນທຸລະກິດ ແລະ ການນຳໃຊ້ຢາສັດຕະວະແພດ ຖືກຕ້ອງຕາມຫຼັກວິຊາການ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ ຮັບປະກັນປອດໄພຕໍ່ ຊີວິດ ແລະ ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ພັດທະນາປະເທດຊາດ.

**ມາດຕາ 2 ຢາສັດຕະວະແພດ**

ຢາສັດຕະວະແພດ ແມ່ນ ຢາກັນພະຍາດ, ປິ່ນປົວ ແລະ ບຳລຸງສຸຂະພາບສັດ ແລະ ສັດນ້ຳ ເປັນຕົ້ນ ຢາວັກຊີນ, ຢາຕ້ານເຊື້ອ, ຢາຂ້າແມ່ກາຝາກ, ຢາວິຕາມິນ ໂດຍໄດ້ຈົດທະບຽນນຳກະຊວງກະສິກຳ ແລະ ປ່າໄມ້ ຢ່າງຖືກຕ້ອງ ລວມທັງອາຫານສັດທີ່ປຸງແຕ່ງເປັນຢາ, ສານເຄມີ ຫຼື ສານຊີວະວັດຖຸທີ່ເປັນຢາສັດຕະວະແພດແບບເຄິ່ງສຳເລັດຮູບ ທັງເປັນວັດຖຸດິບທາງການຢາທີ່ນຳໃຊ້ເພື່ອການສັດຕະວະແພດອີກດ້ວຍ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຢາຕ້ານເຊື້ອຈຸລະຊີບ (Antimicrobial)** ໝາຍເຖິງ ຢາສັດຕະວະແພດທີ່ໄດ້ຈາກເຊື້ອຈຸລະຊີບໃດໜຶ່ງ ແລະ ໄດ້ຈາກການສັງເຄາະທາງເຄມີ ຊຶ່ງສາມາດອອກລິດຢຸດ ຫຼື ຢັບຢັ້ງການຈະເລີນເຕີບໂຕ ຫຼື ການແບ່ງຕົວຂອງ ເຊື້ອຈຸລະຊີບທີ່ເຮັດໃຫ້ເກີດພະຍາດສັດໄດ້;

2. **ຢາຕ້ານເຊື້ອ (Antibiotic)** ໝາຍເຖິງສານປະກອບທີ່ສ້າງຂຶ້ນໂດຍເຊື້ອຈຸລະຊີບ ຊະນິດໃດໜຶ່ງ ອາດເປັນເຊື້ອແບັກທີເຣຍ ຫຼື ເຊື້ອເຫັດ ຊຶ່ງສາມາດຢັບຢັ້ງ ຫຼື ຢຸດການຈະເລີນເຕີບໂຕ ຫຼື ມີລິດທຳລາຍເຊື້ອຈຸລະຊີບອີກກຸ່ມອື່ນ ຫຼື ກຸ່ມໃດກຸ່ມໜຶ່ງໄດ້;
3. **ການຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ (Antimicrobial resistance)** ໝາຍເຖິງ ຄວາມສາມາດຂອງເຊື້ອແບັກທີເຣຍ ຫຼື ເຊື້ອລາສາຍພັນໃດໜຶ່ງທີ່ຍັງສາມາດເຕີບໂຕ ຫຼື ຢູ່ລອດ ເຖິງວ່າຈະໄດ້ສຳພັດກັບຢາຕ້ານເຊື້ອຈຸລະຊີບ ທີ່ມີຄວາມເຂັ້ມຂຸ້ນພຽງພໍກັບການປ້ອງກັນ ຫຼື ປິ່ນປົວທີ່ໄດ້ຜົນມາກ່ອນໜ້ານັ້ນແລ້ວກໍຕາມ;
4. **ສ່ວນປະກອບຂອງຢາສັດຕະວະແພດ** ໝາຍເຖິງ ວັດຖຸທີ່ໄດ້ຈາກທຳມະຊາດ ຫຼື ສັງເຄາະຂຶ້ນ ທີ່ເປັນຕົວຢາຫຼັກທີ່ອອກລິດໃນການປ້ອງກັນ ແລະ ປິ່ນປົວພະຍາດໄດ້ໂດຍກົງ, ວັດຖຸທີ່ເປັນຕົວຢາເສີມເພື່ອເຮັດໃຫ້ການອອກລິດຂອງຕົວຢາຫຼັກມີປະສິດທິພາບດີຂຶ້ນ ແລະ ວັດຖຸທີ່ເປັນສານປຸງແຕ່ງຢາທີ່ບໍ່ອອກລິດ ເພື່ອເຮັດໃຫ້ຢາຄົງຕົວເປັນຮູບແບບຕ່າງໆ ເປັນຕົ້ນ ສານແຕ່ງກິ່ນ, ລົດ, ສີ ຫຼື ສານເຮັດໃຫ້ຢາເປັນຮູບແບບຕ່າງໆ ເຊັ່ນ: ເປັນນໍ້າ, ຂອງແຫຼວ, ກ້ອນ, ຝຸ່ນ, ແຄບຊູນ ຫຼື ລູກກອນ;
5. **ອາຫານສັດປະສົມຢາສັດຕະວະແພດ** ໝາຍເຖິງ ຜະລິດຕະພັນທີ່ໄດ້ມາຈາກການປະສົມລະຫວ່າງ ຢາອາຫານສັດ ແລະ ຢາສັດຕະວະແພດ ເພື່ອເປົ້າໝາຍບຳລຸງ, ກັນ ຫຼື ປິ່ນປົວພະຍາດສັດ ແລະ ສັດນໍ້າ ໃດໜຶ່ງເປັນການສະເພາະ;
6. **ຕຳລາຢາສັດຕະວະແພດ** ໝາຍເຖິງ ສູດທີ່ໃຊ້ເຂົ້າໃນການຜະລິດຢາ ຊຶ່ງລະບຸເຖິງສ່ວນປະກອບ ແລະ ປະລິມານຂອງສ່ວນປະກອບຂອງຢາ ທີ່ໄດ້ນຳມາປະສົມລວມກັນ ໃຫ້ເປັນຜະລິດຕະພັນສຳເລັດຮູບທີ່ມີສັບພະຄຸນເປັນຢາສັດຕະວະແພດ;
7. **ພາຊະນະບັນຈຸ** ໝາຍເຖິງ ວັດຖຸໃດໜຶ່ງ ທີ່ໃຊ້ບັນຈຸ ຫຼື ຫຸ້ມຫໍ່ຢາສັດຕະວະແພດເປັນການສະເພາະ;
8. **ສະຫຼາກຢາ** ໝາຍເຖິງ ຮູບພາບ ແລະ ຂໍ້ຄວາມ ທີ່ຕິດ ຫຼື ພິມໃສ່ພາຊະນະບັນຈຸ ເພື່ອໃຫ້ຂໍ້ມູນກ່ຽວກັບຊື່ຢາສັດຕະວະແພດ, ສັບພະຄຸນ, ຄຸນປະໂຫຍດ, ສ່ວນປະກອບ, ວັນທີ່ຜະລິດ, ວັນໝົດອາຍຸການນຳໃຊ້, ວິທີການເກັບຮັກສາ, ວິທີນຳໃຊ້ ແລະ ຂໍ້ມູນຂອງຜູ້ຜະລິດຢາສັດຕະວະແພດ;
9. **ໃບແນະນຳການນຳໃຊ້ຢາ** ໝາຍເຖິງ ເອກະສານທີ່ມີຂໍ້ຄວາມກ່ຽວກັບຢາສັດຕະວະແພດຢູ່ໃນ ພາຊະນະ ຫຼື ກ່ອງບັນຈຸ ເພື່ອເຮັດໃຫ້ຜູ້ນຳໃຊ້ສາມາດອ່ານໃຫ້ເຂົ້າໃຈຄວາມໝາຍ ແລະ ລາຍລະອຽດກ່ຽວກັບຢາສັດຕະວະແພດ;
10. **ຜູ້ໄດ້ຮັບອະນຸຍາດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອົງການຄຸ້ມຄອງວຽກງານຢາສັດຕະວະແພດ ອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບການຜະລິດ, ນຳເຂົ້າ, ຈຳໜ່າຍ, ສົ່ງອອກ ຫຼື ສົ່ງຜ່ານຢາສັດຕະວະແພດ;
11. **ຢາສັດຕະວະແພດປອມ** ໝາຍເຖິງ ຢາສັດຕະວະແພດທີ່ເຮັດທຽມຂຶ້ນແລ້ວອ້າງວ່າເປັນຢາແທ້ ຊຶ່ງອາດຈະປອມເຄື່ອງໝາຍການຄ້າ ຫຼື ສະຖານທີ່ຂອງຜູ້ຜະລິດຢາ ຫຼື ເປັນຢາທີ່ບໍ່ຖືກຕາມທີ່ໄດ້ຂຶ້ນທະບຽນໄວ້ ຫຼື ເປັນຢາສະແດງສະຫຼາກ ຫຼື ເອກະສານກຳກັບຢາທີ່ບໍ່ເປັນຄວາມຈິງ ຫຼື ເປັນຢາສັດຕະວະແພດປະສົມຢາສັດຕະວະແພດ ແຕ່ຢາສັດຕະວະແພດນັ້ນເປັນຢາສັດຕະວະແພດປອມ ຫຼື ເປັນຢາທີ່ບໍ່ຖືກຕ້ອງຕາມມາດຕະຖານທີ່ກຳນົດໄວ້ໃນຕຳລາຢາທີ່ໄດ້ຂຶ້ນທະບຽນກັບ ອົງການຄຸ້ມຄອງວຽກງານຢາສັດຕະວະແພດ;
12. **ຢາສັດຕະວະແພດບໍ່ໄດ້ມາດຕະຖານ** ໝາຍເຖິງ ຢາສັດຕະວະແພດ ທີ່ມີປະລິມານ ຫຼື ຄວາມແຮງ ຂອງສານອອກລິດຫຼຸດຄ່າຕໍ່າສຸດ ຫຼື ເກີນຄ່າສູງສຸດ ທີ່ກຳນົດໄວ້ໃນຕຳລາຢາທີ່ໄດ້ຂຶ້ນທະບຽນໄວ້ ຫຼື ເປັນຢາທີ່ມີສ່ວນປະກອບ, ຄ່າຄວາມບໍລິສຸດ, ຄຸນລັກສະນະຜິດໄປຈາກຕຳລາຢາທີ່ໄດ້ຂຶ້ນທະບຽນໄວ້ ຫຼື ເປັນຢາສັດຕະວະແພດປະສົມຢາສັດຕະວະແພດ ແຕ່ຢາສັດຕະວະແພດນັ້ນ ເປັນຢາສັດຕະວະແພດທີ່ບໍ່ໄດ້ມາດຕະຖານ ຫຼື ບໍ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ;